# ບົດຮຽນໂຮງຮຽນວັນອາທິດ
## ວັນອາທິດທີ 17 ຕຸລາ 2021 (10-17-2021)

---

## ພື້ນຖານສຳລັບຄວາມໝັ້ນໃຈ

*ເມື່ອໃດທີ່ທ່ານເຫັນຄວາມໝັ້ນໃຈໃນໃຜຜູ້ນຶ່ງໃຫ້ຜົນຄຸ້ມຄ່າແທ້ໆ?*

**ຈຸດສຳຄັນໃນບົດຮຽນ:** ຄວາມໝັ້ນໃຈມາຈາກການໄວ້ວາງໃຈໃນພຣະເຈົ້າ.

**ພຣະຄັມພີຕອບສນອງຕໍ່ຊີວິດ:** ຫຼາຍປີຜ່ານມາແລ້ວ, ເພື່ອນຂອງຂ້າພະເຈົ້າໄດ້ທ້າທາຍຂ້າພະເຈົ້າໃຫ້ໂຕນຈ້ອງຈາກເຄື່ອງບິນ(skydiving). ເນື່ອງຈາກຄວາມກົດດັນຂອງໝູ່ເພື່ອນຮອບຂ້າງຕໍ່ເນື່ອງກັນຢ່າງບໍ່ຢຸດຢັ້ງ, ໃນທີ່ສຸດຂ້າພະເຈົ້າກໍໄດ້ຕົກລົງເຖິງແມ່ນວ່າບໍ່ເຕັມໃຈກໍ່ຕາມ. ເຄື່ອງວັດຄວາມໝັ້ນໃຈຂອງຂ້າພະເຈົ້າສືບຕໍ່ຖອຍວູບລົງ! ໃນຂນະທີ່ມື້ກະໂດດຫຍັບໃກ້ເຂົ້າມາ. ຂ້າພະເຈົ້າຈະບໍ່ລືມຈັກເທື່ອເວລາໃນມື້ກະໂດດ-ຈາກຄວາມສູງ 13,000 ຟຸດ-ໃນຂນະທີ່ປະຕູຂອງເຄື່ອງບິນໄດ້ເປີດອອກຂນະທີ່ບິນຢູ່ເທິງທ້ອງຟ້າ. ຂ້າພະເຈົ້າຮ້ອງອອກມາຢ່າງແຮງໃສ່ຊາຍທີ່ໄດ້ມັດຕົວຂອງລາວໃສ່ຕົວຂອງຂ້າພະເຈົ້າ: "**ບາດເຮົາສິລົງຈອດທີ່ພື້ນດິນເດ? ເຈົ້າບໍ່ເຄີຍໄດ້ເວົ້າກັບຂ້ອຍກ່ຽວກັບເຣື່ອງນີ້ເລີຍ!!!**" ລາວຕອບຂ້າພະເຈົ້າວ່າ: "ຂ້ອຍຈະສອນເຈົ້າໃນຂນະທີ່ພວກເຮົາຢູ່ເທິງອາກາດ!" ໃນຂນະທີ່ຂ້າພະເຈົ້າຮ້ອງບໍ່ທັນຈົບ, "**ສອນຂ້ອຍຢູ່ເທິງອາກາດ?!**" ພວກເຮົາກຳລັງຕົກລົງສູ່ພື້ນດິນຢູ່ດຽວນີ້! (ກຳລັງດິ່ງລົງສູ່ພະສຸທາ).

ແມ່ນຫຍັງທີ່ໃຫ້ຄວາມໝັ້ນໃຈແກ່ຂ້າພະເຈົ້າກະໂດດອອກຈາກເຄື່ອງບິນທີ່ບິນດີຢູ່ແລ້ວນັ້ນ? ມັນແມ່ນທາງດຽວກັນກັບສິ່ງທີ່ໃຫ້ຄວາມໝັ້ນໃຈແກ່ພວກເຮົາໃຫ້ກ້າວໄປຢ່າງກ້າຫານ ໃນຂນະທີ່ພວກເຮົາ<u>ກຳລັງຕັດສິນໃຈ</u>ໃນຊີວິດຂອງພວກເຮົາ. ພວກເຮົາຈະໄດ້ຮັບການຮັບປະກັນ <u>ໃນການກະໂດດອອກໄປ</u> ດ້ວຍວິທີໃດໃນເມື່ອພຣະເຈົ້າຊົງຮຽກເອີ້ນໃຫ້ພວກເຮົາອອກໄປໃນທິດທາງທີ່ພວກເຮົາ: <u>ບໍ່ຮູ້ຫຍັງເລີຍ</u>, <u>ເກີນຂອບເຂດ</u>, ຫຼື <u>ແສນໄກ</u>? **ຂໍໃຫ້ພວກເຮົາພາກັນມາເບິ່ງສັນຍານບາງຢ່າງຈາກຊາຍຜູ້ນຶ່ງ ຊື່ວ່າ <u>ອັບຣາມ</u> ຜູ້ທີ່ໄດ້ສະແດງໃຫ້ເຫັນເຖິງຄວາມໝັ້ນໃຈແບບນັ້ນ.**

**ພຣະຄັມພີກ່າວວ່າແນວໃດ?** (ເບິ່ງຕາມຫົວຂໍ້ 1, 2, ແລະ 3,)

### ການສຶກສາພຣະຄັມພີ

### 1. <u>ປະຖົມມະການ 12:1-3</u>

*1ຄັນຕໍ່ມາ ພຣະຜູ້ເປັນເຈົ້າໄດ້ຊົງບອກແກ່ອັບຣາມວ່າ, "ຈົ່ງອອກຈາກປະເທດຂອງເຈົ້າ ຈາກຍາດພີ່ນ້ອງແລະ ຈາກບ້ານຂອງ*
*ເຈົ້າ ແລ້ວໄປໃນປະເທດທີ່ເຮົາຈະບອກເຈົ້າ. 2ເຮົາຈະໃຫ້ເຈົ້າມີເຊື້ອສາຍຫລາຍຂຶ້ນແລ້ວເກີດ ເປັນຊົນຊາດໃຫຍ່ ເຮົາຈະອວຍ*
*ພອນໃຫ້ເຈົ້າເປັນຜູ້ທີ່ມີຊື່ສຽງ ແລະຜູ້ອື່ນຈະໄດ້ຮັບພອນຍ້ອນເຈົ້າ. 3ເຮົາຈະອວຍພອນຜູ້ທີ່ອວຍພອນເຈົ້າແຕ່ເຮົາຈະສາບແຊ່ງ*
*ຜູ້ທີ່ສາບແຊ່ງເຈົ້າ ທຸກໆຊົນຊາດໃນໂລກຈະຂໍໃຫ້ເຮົາອວຍພອນພວກເຂົາ ເໝືອນດັ່ງເຮົາໄດ້ອວຍພອນໃຫ້ພວກເຈົ້າ."*

ພຣະເຈົ້າໄດ້ຊົງທຳພັນທະສັນຍານີ້ກັບອັບຣາມດົນນານມາແລ້ວ, <u>ແຕ່ນີ້ເປັນພຣະສັນຍາຊຶ່ງຍັງຄົງມີຊີວິດຢູ່ເຖິງປັດຈຸບັນ</u>. ໃນຖານະທີ່ເປັນບັນດາຜູ້ທີ່ຕິດຕາມພຣະຄຣິດ, ພວກເຮົາຈຳເປັນຕ້ອງດຳເນີນຊີວິດໃນຜົນປໂຍດແຫ່ງພຣະສັນຍາທີ່ເປັນຈິງນີ້. ນີ້ແມ່ນພຣະສັນຍາທີ່ພຣະເຈົ້າຈະບໍ່ຊົງລືມສິ່ງຊົງສ້າງຂອງພຣະອົງ, ແຕ່ພຣະອົງຈະຊົງປະທານຫົນທາງສຳລັບພວກເຮົາທີ່ຈະຢູ່ໃນຄວາມສຳພັນອັນຖືກຕ້ອງກັບພຣະອົງ. ນີ້ແມ່ນຈຸດເລີ່ມຕົ້ນຂອງພຣະຄຸນທີ່ເປີດເຜີຍຂອງພຣະອົງ. ພວກເຮົາເຫັນພຣະ

ສັນຍານີ້ໃນທີ່ສຸດໄດ້ສະແດງອອກແລະສຳເລັດດ້ວຍການກຳເນີດຂອງພຣະເຢຊູ, ຜູ້ຊົງເປັນເຊື້ອສາຍຂອງອັບຣາມ (ຄາລາ-ເຕັຽ 3:16).

ພຣະເຈົ້າໄດ້ຊົງເລືອກເອົາ ອັບຣາມ [ນາມຊື່ທີ່ພຣະເຈົ້າໄດ້ຊົງປ່ຽນຫຼັງຈາກນັ້ນມາເປັນ ອັບຣາຮາມ (ປຖກ 17:5)] ເພື່ອເປັນການເລີ່ມຕົ້ນພຣະສັນຍານີ້. ມັນແມ່ນ **<u>ພຣະສັນຍາແຫ່ງການເພີ່ມທະວີຄູນ</u>**, ໂດຍວິທີທາງຂອງ<u>ແຜ່ນດິນ</u>, <u>ລູກຫຼານ</u>, ແລະ<u>ພຣະພອນ</u>. ພຣະເຈົ້າໄດ້ຊົງບອກອັບຣາມວ່າພຣະອົງຈະຊົງເຮັດໃຫ້ຊື່ຂອງລາວນັ້ນຍິ່ງໃຫຍ່; ເວົ້າອີກຢ່າງນຶ່ງ, ບັນພະບຸລຸດຂອງເຊື້ອສາຍເຜົ່າພົງນີ້ຈະມີຊື່ສຽງໂດ່ງດັງ. ປັດຈຸບັນນີ້, ສາມສາສນາທີ່ຍິ່ງໃຫຍ່ຂອງໂລກຄື: ສາສນາອິສລາມ, ສາສນາຢິວ, ແລະຄຣິສຕະສາສນາ-ທັງສາມສາສນາໄດ້ລະບຸຊື່ຂອງ ອັບຣາຮາມ ໃຫ້ເປັນບຸກຄົນທີ່ສຳຄັນ. ພຣະເຈົ້າໄດ້ຊົງກະທຳຕາມທີ່ພຣະອົງໄດ້ຊົງໃຫ້ພຣະສັນຍາໄວ້ແລ້ວນັ້ນ: ພຣະອົງໄດ້ຊົງເຮັດໃຫ້ ອັບຣາມ ມີຊື່ສຽງໂດ່ງດັງ. ແຕ່ຫຼາຍໄປກວ່າການເປັນທີ່ຮູ້ຈັກກັນດີນັ້ນ, ຄວາມຍິ່ງໃຫຍ່ຂອງ ອັບຣາມ ຈະມີຄວາມໝາຍສຳຄັນເພາະວ່າປະຊາຊົນທົ່ວທັງໂລກຈະໄດ້ຮັບພຣະພອນໂດຍຜ່ານລາວເມື່ອພຣະເຢຊູຜູ້ຊົງສືບເຊື້ອສາຍຂອງລາວຊົງສະເດັດມາສູ່ໂລກ.

*ເມື່ອໃດທີ່ທ່ານໄດ້ຮູ້ສຶກວ່າພຣະເຈົ້າຊົງນຳພາທ່ານໃຫ້ເຮັດສິ່ງໃດສິ່ງນຶ່ງໂດຍການທ້າທາຍ?*

ດັ່ງນັ້ນ, ເມື່ອອັບຣາມໄດ້ຍິນຄຳສເນີຂອງພຣະເຈົ້າ, ລາວຄົງຈະຖ້ວມລົ້ນດ້ວຍຄຳສເນີເຫຼົ່ານັ້ນ, ແຕ່ວ່າລາວໄດ້ມີຄວາມປາຖນາທີ່ຈະໄວ້ໃຈແລະປະຕິບັດຕາມ. ຄວາມໝັ້ນໃຈຂອງອັບຣາມບໍ່ໄດ້ຢູ່ທີ່ຕົວຂອງລາວເອງ, ແຕ່ໄດ້ຢູ່ໃນ ພຣະອົງຜູ້ຊົງຮຽກເອີ້ນລາວ. <u>ຍິ່ງພວກເຮົາເຂົ້າໃຈນ້ຳພຣະທັຍຂອງພຣະເຈົ້າຫຼາຍເທົ່າໃດ, ການພັກພິງແລະຄວາມໝັ້ນໃຈໃນພຣະອົງກໍຍິ່ງແຂງແຮງຂຶ້ນຫຼາຍເທົ່ານັ້ນ</u>**!** ດ້ວຍເຫດຜົນນີ້, ເມື່ອພຣະເຈົ້າຊົງຮຽກເອີ້ນພວກເຮົາສິ່ງໃດສິ່ງນຶ່ງໂດຍຈຳເພາະ, ພຣະສຸຣະສຽງຂອງພຣະອົງຈະບໍ່ເປັນທີ່ແປກປລາດສຳລັບພວກເຮົາ; ກົງກັນຂ້າມ, ມັນຈະເປັນສຽງທີ່ຄຸ້ນຫູ. ນີ້ຈະເປັນການຊ່ວຍເຫຼືອໃຫ້ພວກເຮົາມີຄວາມໝັ້ນໃຈ ໃນການເຄື່ອນຍ້າຍແລະປະຕິບັດສິ່ງທີ່ພຣະເຈົ້າໄດ້ຊົງຮຽກເອີ້ນໃຫ້ພວກເຮົາທຳ. **<u>ໃນເມື່ອພວກເຮົາໄວ້ວາງໃຈໃນພຣະເຈົ້າ</u> <u>ພວກເຮົາປະຕິບັດຕາມຄວາມໄວ້ວາງໃຈນັ້ນ</u>**.

## 2. <u>ປະຖົມມະການ 12:4-6</u>

*[4]ເມື່ອອັບຣາມອາຍຸໄດ້ 75 ປີ ເພິ່ນກໍອອກຈາກເມືອງຮາຣານ ໄປຕາມທີ່ພຣະຜູ້ເປັນເຈົ້າຊົງບອກ ໂລດກໍໄປນຳເພິ່ນດ້ວຍ.*
*[5]ອັບຣາມພາຊາຣາຍເມຍຂອງຕົນກັບໂລດຫລານຊາຍ ພ້ອມທັງຊັບສິ່ງຂອງທີ່ໄດ້ສະສົມໄວ້ໃນເມືອງຮາຣານ ແລະພວກຂ້ອຍໃຊ້ໄປນຳດ້ວຍ ພວກເຂົາເຈົ້າອອກເດີນທາງມຸ້ງໜ້າໄປຍັງປະເທດການາອານ. [6]ເມື່ອຮອດປະເທດການາອານແລ້ວ ອັບຣາມ-ຍັງເດີນທາງຜ່ານປະເທດໄປຈົນເຖິງບ່ອນສັກສິດຂອງເມືອງເຊເຄັມ ຄືຕົ້ນໄມ້ສັກສິດທີ່ໂມເຣ (ໃນເວລານັ້ນ ຊາວການາອານກໍໄດ້ອາສັຍຢູ່ໃນດິນແດນນັ້ນແລ້ວ).*

ພຣະເຈົ້າໄດ້ຊົງບອກອັບຣາມໃຫ້ອອກໄປ ແລະກໍແມ່ນສິ່ງທີ່ລາວໄດ້ເຮັດແທ້ໆ! ອັບຣາມເກັບມ້ຽນຊັບສິນຂອງຕົນແລະປະໄວ້ທຸກຢ່າງທີ່ລາວຮູ້. ຄວາມສະດວກສະບາຍ, ຄວາມສຳເລັດ, ແລະທຸກສິ່ງທີ່ລາວຄຸ້ນເຄີຍກັບລາວດຽວນີ້ກຳລັງຈະຢູ່ເບື້ອງຫຼັງລາວ(ປະຖິ້ມໄວ້). ອັບຣາມຕອບສນອງການຊົງຮຽກເອີ້ນຂອງພຣະເຈົ້າດ້ວຍການເຊື່ອຟັງ. ລາວບໍ່ໄດ້ຕອບສນອງໂດຍພຽງແຕ່ຢືນຢັນສິ່ງທີ່ພຣະເຈົ້າໄດ້ຊົງກ່າວໄວ້, <u>ລາວຕອບສນອງດ້ວຍການກະທຳ</u>.

*ເມື່ອໃດທີ່ທ່ານໄດ້ພົບເຫັນວ່າ ມັນເປັນການທ້າທາຍໃນການຕິດຕາມການຊົງນຳພາຂອງພຣະເຈົ້າ?*

ເມື່ອມາເຖິງ ຄານາອານ, “ອັບຣາມໄດ້ຜ່ານດິນແດນໄປ” ເຖິງແມ່ນວ່າລາວຮູ້ວ່າມີປະຊາຊົນໄດ້ອາສັຍຢູ່ກ່ອນແລ້ວໃນດິນແດນທີ່ພຣະເຈົ້າໄດ້ຊົງພຣະສັນຍາຈະມອບໃຫ້. ເມື່ອເວົ້າເຖິງລູກ, ອັບຣາມສືບຕໍ່ໄວ້ວາງໃຈໃນພຣະເຈົ້າ ເຖິງແມ່ນວ່າລາວກັບເມຍເປັນໝັນຈົນຂນະນີ້ກໍ່ອາຍຸໄດ້ 75 ປີແລ້ວ. ເຖິງຢ່າງໃດກໍ່ຕາມ, ລາວສືບຕໍ່ເດີນໜ້າ ແລະວາງໃຈໃນພຣະເຈົ້າໃນການ

ຊົງນຳພາຂອງພຣະອົງ. ພຣະເຈົ້າຊົງກ່າວໂດຍສະເພາະຕໍ່ອັບຣາມ, ແຕ່ບໍ່ແມ່ນແຕ່ພຽງລາວຄົນດຽວເທົ່ານັ້ນທີ່ກ້າວອອກໄປ. ນາງຊາຣາຍ ພັລຍາ ແລະ ໂລດ ຫຼານຊາຍກໍ່ໄດ້ກ້າວອອກໄປນຳກັນ. ພວກເຂົາເຈົ້າໄດ້ເຊື່ອແລະວາງໃຈວ່າອັບຣາມເຊື່ອແລະວາງໃຈໃນພຣະເຈົ້າ.

ມັນເປັນການງ່າຍດາຍສຳລັບພວກເຮົາທີ່ຈະສູນເສັຽຄວາມໝັ້ນໃຈໃນທິດທາງທີ່ພຣະເຈົ້າຊົງນຳພາພວກເຮົາໄປ. ພວກເຮົາສາມາດເຄື່ອນໄຫວໄປມາໄດ້ງ່າຍ ຈາກການເຊື່ອຟັງ ສູ່ ການລະເມີດ(ບໍ່ເຊື່ອຟັງ). ແຕ່ຂອບພຣະຄຸນພຣະເຈົ້າທີ່ພຣະອົງບໍ່ໄດ້ຊົງປ່ອຍພວກເຮົາໄວ້ຕາມລຳພັງຜູ້ດຽວ: ໃນຖານະທີ່ພວກເຮົາເປັນຜູ້ຕິດຕາມ, ພຣະອົງໄດ້ຊົງວາງພຣະວິນຍານບໍຣິສຸດຂອງພຣະອົງໄວ້ໃນຊີວິດຂອງພວກເຮົາ. ເມື່ອໃດຄວາມໝັ້ນໃຈຂອງພວກເຮົາອ່ອນແອລົງ, ຈົ່ງພັກພິງໃນພຣະວິນຍານບໍຣິສຸດຂອງພຣະອົງ. **ເມື່ອມີຄວາມຮູ້ສຶກບໍ່ແນ່ໃຈ ພວກເຮົາຕ້ອງໄວ້ວາງໃຈໃນພຣະວິນຍານບໍຣິສຸດ**.

## 3. ປະຖົມມະການ 12:7-8

*7ພຣະຜູ້ເປັນເຈົ້າໄດ້ຊົງປາກົດຕໍ່ ອັບຣາມແລະກ່າວຕໍ່ເພິ່ນວ່າ, "ນີ້ແມ່ນດິນແດນທີ່ເຮົາຈະມອບໃຫ້ແກ່ເຊື້ອສາຍຂອງເຈົ້າ" ສະ*
*ນັ້ນ ໃນບ່ອນນີ້ອັບຣາມໄດ້ສ້າງແທ່ນບູຊາຖວາຍພຣະຜູ້ເປັນເຈົ້າທີ່ໄດ້ຊົງປາກົດຂຶ້ນແກ່ຕົນ.*
*8ຫລັງຈາກນັ້ນເພິ່ນໄດ້ຍົກຍ້າຍໄປ ທາງທິດໃຕ້ ຄືໄປເທິງພູທາງທິດຕາເວັນອອກຂອງເມືອງເບັດເອນ ແລະໄດ້ຕັ້ງທີ່ພັກອາໄສຢູ່ລະຫວ່າງເມືອງເບັດເອນກັບ ເມືອງອາອີ ໃນທີ່ນັ້ນອັບຣາມໄດ້ສ້າງແທ່ນບູຊາ ແລະນະມັສການພຣະຜູ້ເປັນເຈົ້າ.*

ຍິ່ງພວກເຮົາຮຽນຮູ້ການໄວ້ວາງໃຈໃນພຣະເຈົ້າຫຼາຍເທົ່າໃດ, ຄວາມໝັ້ນໃຈຂອງພວກເຮົາກໍຈະເລີນໂຕບໂຕຍິ່ງຂຶ້ນຫຼາຍເທົ່ານັ້ນ. ສິ່ງທີ່ເປັນຕາງຶດງໍ້ກ່ຽວກັບພຣະເຈົ້າແມ່ນວ່າເມື່ອພວກເຮົາໄວ້ວາງໃຈພຣະອົງຫຼາຍຂຶ້ນເລື້ອຍໆ, ພຣະອົງຊົງສັດຊື່ທີ່ຈະເພີ້ມຄວາມເຊື່ອຂອງພວກເຮົາໂດຍການຢືນຢັນພວກເຮົາຢ່າງຕໍ່ເນື່ອງຕລອດທາງ. ການເດີນທາງຈາກ ຮາຣານ ສູ່ການາອານເປັນລະຍະທາງປະມານ 400 ໄມ໌. ດ້ວຍເຫດວ່າ ອັບຣາມ ແລະຝູງຊົນຮ່ວມທາງອາດຈະເດີນທາງໂດຍຕີນເປົ່າ, ພວກເພິ່ນອາດຈະໃຊ້ເວລາຫຼາຍເດືອນເພື່ອບັນລຸເຖິງຈຸດໝາຍປາຍທາງ. ກ່ອນອັບຣາມຈະກາງຜ້າເຕັ້ນໃນ "ຈ້າຍພູທາງຕາເວັນອອກຂອງເມືອງ ເບເທລ", ພຣະເຈົ້າໄດ້ຊົງສຳແດງພຣະອົງແກ່ລາວ. ນີ້ເປັນການຮັບປະກັນຢ່າງແນ່ນອນຕໍ່ອັບຣາມໃນລະຍະການເດີນທາງຂອງລາວ. ການປາກົດຕົວຂອງພຣະອົງຢືນຢັນວ່າພຣະເຈົ້າຊົງສະຖິດຢູ່ກັບລາວສເມີໄປ.

*ແມ່ນຫຍັງເປັນເຄື່ອງໝາຍໃນຊີວິດຂອງທ່ານ ຊຶ່ງຊ່ອຍທ່ານໃຫ້ຈົດຈຳຄວາມສັດຊື່ຂອງພຣະເຈົ້າ?*

ເມື່ອພຣະເຈົ້າຊົງສຳແດງພຣະອົງເອງຕໍ່ອັບຣາມໃນຂໍ້ທີ່ 7 ໃຫ້ການ**ຮັບປະກັນ**ການປາກົດຕົວ ແລະພຣະສັນຍາຂອງພຣະອົງກ່ຽວກັບດິນດອນຕ່ອນຫຍ້າ ແລະ ລູກຫຼານ. ອັບຣາມໄດ້ຕອບຮັບດ້ວຍການນະມັສການ. ແທ່ນບູຊາຂອງອັບຣາມແມ່ນບ່ອນນະມັສການ, ບອ່ນຈົດຈຳ, ແລະ ຫົນທາງຊີ້ໄປສູ່ພຣະເຈົ້າ ແລະ "ອວດອ້າງ"(ຄຸຍໂມ້) ຄວາມຍິ່ງໃຫຍ່ຂອງພຣະອົງ. ໃນເມື່ອພວກເຮົາມີຄວາມກ້າຫານໃນການກ້າວອອກໄປໃນຄວາມເຊື່ອ, ຕາມລະຍະການເດີນທາງ **ພວກເຮົາຈຳເປັນຕ້ອງຍຶດໝັ້ນໃນຄວາມຈິງທີ່ວ່າ ພຣະເຈົ້າຊົງສະຖິດຢູ່ນຳພວກເຮົາຢູ່ສເມີ**. ພວກເຮົາຖືກເຕືອນສະຕິ ທັງສອງຄື: ຢູ່ໃນພຣະຄັມພີພຣະສັນຍາເດີມ ແລະ ພຣະສັນຍາໃໝ່ວ່າພຣະເຈົ້າຈະບໍ່ຊົງ ປ່ອຍປະແລະລະຖິ້ມລູກຂອງພຣະອົງແລະບັນດາຜູ້ທີ່ຕິດຕາມພຣະອົງ (ພບຍ 31:6; ມທ 28:20). ພວກເຮົາຈຳເປັນຕ້ອງຈັບຕາລະມັດລະວັງ ແລະ ຟັງ ວິຖີທາງທີ່ພຣະອົງຊົງຮັບປະກັນແກ່ພວກເຮົາໃນການຊົງສຳແດງພຣະກາຍຂອງພຣະອົງແລະການຢືນຢັນອີກຄັ້ງໃນພຣະສັນຍາທີ່ພຣະອົງໄດ້ຊົງມອບໃຫ້ແກ່ພວກເຮົາທັງຫຼາຍ.

*ແມ່ນຫຍັງເປັນບາງວິທີທາງທີ່ພວກເຮົາສາມາດຈະເລີນເຕີບໂຕໃນຄວາມໝັ້ນໃຈໃນການດໍາເນີນຊີວິດໄປກັບພຣະເຈົ້າ?*

## ນໍາໃຊ້ໃນຊີວິດ

ຄວາມໝັ້ນໃຈມາຈາກການໄວ້ວາງໃຈໃນພຣະເຈົ້າ. ຈົ່ງເລືອກເອົານຶ່ງໃນການນໍາໃຊ້ໃນຊີວິດຕໍ່ລົງໄປນີ້:

- **ຈົ່ງປະເມີນຜົນ.** ຈົ່ງຮັບຄວາມຈິງແລະສັດຊື່ໃນການສໍາຫຼວດຕົນເອງວ່າລະຍະຄວາມສັມພັນຂອງທ່ານກັບພຣະເຈົ້ານັ້ນ ຢູ່ໃກ້ຫຼືໄກພຽງໃດໃນປັດຈຸບັນນີ້? ຈົ່ງສົນທະນາກັບພຣະເຈົ້າກ່ຽວກັບຄວາມຮູ້ສຶກທີ່ແທ້ຈິງຂອງທ່ານ ວ່າຄວາມສັມພັນຂອງທ່ານກັບພຣະອົງດໍາເນີນໄປຮ້າຍດີ(ໃນສະພາບ)ຢ່າງໃດ?
- **ຈົ່ງເລີ່ມປະຕິບັດ.** ມີພາກສ່ວນໃດໃນຊີວິດຂອງທ່ານບໍ່? ທີ່ພຣະເຈົ້າໄດ້ຊົງປຸກລະດົມໃຫ້ທ່ານເຄື່ອນໄຫວ ແຕ່ວ່າທ່ານບໍ່ຫົວຊາເອົາໃຈໃສ່? ການເຄື່ອນໄຫວແນວໃດທີ່ທ່ານສາມາດເຮັດໃນວັນນີ້ ເພື່ອເປັນການເລີ່ມຕົ້ນມຸ່ງໜ້າໄປສູ່ທິດທາງທີ່ພຣະອົງໄດ້ຊົງຮຽກເອີ້ນທ່ານໃຫ້ທ່ານປະຕິບັດ(ຄືທິດທາງທີ່ຖືກຕ້ອງນັ້ນເອງ)?
- **ຈົ່ງບັນທຶກ.** ຈົ່ງຈັບປາກກາຂຶ້ນມາ, ເອົາປື້ມບັນທຶກ ແລ້ວເລີ່ມຕົ້ນຈົດບັນທຶກ(ບັນຊີ). ຈົ່ງສະທ້ອນເຖິງ ແລະ ຈົດຈໍາວ່າພຣະເຈົ້າໄດ້ຊົງສໍາແດງເຖິງການປາກົດຕົວຂອງພຣະອົງ ແລະ ພຣະສັນຍາຂອງພຣະອົງແກ່ທ່ານແນວໃດໃນຊີວິດຂອງທ່ານພາຍໃນລະຍະນຶ່ງເດືອນທີ່ຜ່ານມານີ້?

ທ່ານອາດຈະບໍ່ເຮັດສິ່ງໃດສິ່ງນຶ່ງຮ້າຍກາດດັ່ງການກະໂດດອອກຈາກເຮືອບິນ. ແຕ່ທ່ານຈໍາເປັນຕ້ອງເຮັດສິ່ງໃດສິ່ງນຶ່ງທີ່ສໍາຄັນກວ່ານັ້ນ: <u>ທ່ານຈໍາເປັນຕ້ອງກະໂດດອອກໄປດ້ວຍຄວາມເຊື່ອໃນເມື່ອພຣະເຈົ້າຊົງຮຽກເອີ້ນທ່ານໃຫ້ອອກໄປໃນທິດທາງທີ່ທ່ານມີຄວາມຮູ້ສຶກບໍ່ແນ່ໃຈ</u>.

**<u>ເມື່ອໃດທີ່ທ່ານເຮັດດັ່ງນັ້ນ, ທ່ານສາມາດໝັ້ນໃຈວ່າພຣະອົງຊົງສະຖິດຢູ່ນໍາ</u>.**

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ http://.lsbf.us ແປໂດຍ PSI**